**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ທະນາຄານແຫ່ງ ສປປ ລາວ**
ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 254 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 05 ພຶດສະພາ 2021

## ແຈ້ງການ

**ເຖິງ:** ຜູ້ອໍານວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19)

- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມ ຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມິນາ 2020 ແລະ ບົດແນະນໍາການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 249/ກຄທ, ລົງວັນທີ 11 ພຶດສະພາ 2020.

ອີງຕາມສະພາບການລະບາດຂອງພະຍາດ COVID-19 ຮອບໃໝ່ຢູ່ ສປປ ລາວ ທີ່ມີຄວາມຮ້າຍແຮງ ແລະ ແຜ່ຂະຫຍາຍເປັນວົງກວ້າງໃນຂອບເຂດທົ່ວປະເທດ ເພື່ອເປັນການຊ່ວຍເຫຼືອຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກສະພາບການລະ ບາດດັ່ງກ່າວ ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍແຈ້ງມາຍັງທະນາຄານທຸລະກິດໃຫ້ສືບຕໍ່ເປັນເຈົ້າການປະຕິບັດນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມິນາ 2020 ພ້ອມດຽວກັນນັ້ນ ໃຫ້ທຸກທະນາຄານເປັນເຈົ້າການທົບທວນ ແລະ ປັບປຸງນະໂຍບາຍ, ລະບຽບການພາຍໃນ ເພື່ອແກ້ໄຂສິນເຊື່ອທີ່ໄດ້ຮັບຜົນກະທົບຈາກພະຍາດລະບາດ COVID-19 ຂອງຕົນໃຫ້ແທດເໝາະກັບສະພາບຕົວຈິງ. ພາຍຫຼັງສໍາເລັດການທົບທວນ ແລະ ປັບປຸງດັ່ງກ່າວ ໃຫ້ທະນາຄານແຈ້ງໃຫ້ລູກຄ້າຊາບຢ່າງທົ່ວເຖິງຜ່ານເວບໄຊສ໌ຂອງທະນາຄານ ແລະ ຊ່ອງທາງອື່ນທີ່ເໝາະສົມ ແລະ ລາຍງານ ກຄທ ຊາບ ພາຍໃນເດືອນ ພຶດສະພາ 2021.

ພ້ອມທັງສືບຕໍ່ປະຕິບັດລະບອບການລາຍງານກ່ຽວກັບການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບເປັນປະຈໍາເດືອນຕາມໄລຍະເວລາທີ່ກໍານົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຮອງ ຫົວໜ້າ ຮັກສາການຫົວໜ້າກົມ

ຄໍາຫຼ້າ ເຮືອນມະນີວົງ

**ພົວພັນ ແລະ ປະສານງານ:**
ພະແນກນິຕິກໍາ, ກົມຄຸ້ມຄອງທະນາຄານທຸລະກິດ
ໂທ: 021 254291

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**